ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນ ໄກສອນພົມວິຫານ

ເຈົ້ານະຄອນ

ເລກທີ 393 /ຈນ.ກສ

ວັນທີ 09 AUG 2021

# ຄຳສັ່ງ

## ຂອງທ່ານ ເຈົ້ານະຄອນ ໄກສອນພົມວິຫານ

## ວ່າດ້ວຍການປິດ (Lock down) ນະຄອນ ໄກສອນພົມວິຫານ

ເຖິງ: ບັນດາທ່ານ ເຈົ້າເມືອງ 14 ເມືອງ, ຫົວໜ້າ ປກຊ- ປກສ, ພະແນກການ, ກົມກອງ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການທັງພາກລັດ ແລະ ເອກະຊົນ, ພໍ່ແມ່ປະຊາຊົນ ບັນດາເຜົ່າ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດຢູ່ນະຄອນໄກສອນພົມວິຫານ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 68/ ສພຊ, ລົງວັນທີ 14 ທັນວາ 2015, ພາກທີ VI ໝວດທີ 04 ມາດຕາ 74.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີການປ້ອງກັນ, ສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານການລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 15/ ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ການປຶກສາຫາລືຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດພະຍາດໂຄວິດ-19 ຂັ້ນແຂວງ ຄັ້ງວັນທີ 09 ສິງຫາ 2021.

ເນື່ອງຈາກມີຜູ້ຕິດເຊື້ອຢູ່ໃນຊຸມຊົນຂອງນະຄອນ ໄກສອນພົມວິຫານ (ນັບແຕ່ວັນທີ 5 ສິງຫາ 2021 ມາຮອດປະຈຸບັນນີ້) ຜູ້ຕິດເຊື້ອ ຈຳນວນ 6 ຄົນ ໄດ້ເຄື່ອນໄຫວໄປໃນຫລາຍຈຸດ ໂດຍສະເພາະ: ຕະຫລາດສະຫວັນໄຊ ແລະ ບັນດາຮ້ານມິນິມາດ, ຫ້ອງກວດພະຍາດເອກະຊົນ ແລະ ສະຖານທີ່ອື່ນໆ. ຕໍ່ສະພາບການດັ່ງກ່າວນີ້ ຄະນະສະເພາະກິດນະຄອນໄກສອນພົມວິຫານໄດ້ສົມທົບກັບຄະນະສະເພາະກິດຂັ້ນແຂວງ ເພື່ອປະເມີນ ແລະ ເຫັນວ່າ ມີຄວາມສ່ຽງສູງຕໍ່ການແຜ່ຂະຫຍາຍການລະບາດອອກສູ່ຊຸມຊົນເປັນວົງກວ້າງ, ຈຶ່ງມີຄວາມຈຳເປັນໃຫ້ທຸກພາກສ່ວນເອົາໃຈໃສ່ປະຕິບັດມາດຕະການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຢ່າງເຂັ້ມງວດ.

**ເຈົ້ານະຄອນ ໄກສອນພົມວິຫານອອກຄຳສັ່ງ:**

1. ເຫັນດີປິດ (Lock down) ນະຄອນ ໄກສອນພົມວິຫານ ນັບແຕ່ເວລາ 21 ໂມງ 00 ນາທີ ຂອງວັນທີ 09 ສິງຫາ ເຖິງ ເວລາ 21 ໂມງ 00 ຂອງວັນທີ 23 ສິງຫາ 2021 ແລະ ໃຫ້ທຸກພາກສ່ວນເອົາໃຈໃສ່

สแกนด้วย CamScanner

ສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຄໍາສັ່ງ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ຕ້ານ ພະຍາດໂຄວິດ-19 ແລະ ຄໍາສັ່ງຂອງທ່ານເຈົ້າແຂວງວ່າດ້ວຍການເພີ່ມທະວີການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດໂຄວິດ-19 ເລກທີ 1327/ຈຂ. ສຂ ລົງວັນທີ 04 ສິງຫາ 2021;

2. ປະກາດເອົາບ້ານ ໂນນສະຫວາດ ແລະ ໂຮງຮຽນ SOS ເປັນເຂດພື້ນທີ່ສີແດງ (ເຂດມີການຕິດເຊື້ອ), ເອົາບ້ານທີ່ອ້ອມສະຖານທີ່ດັ່ງກ່າວເປັນເຂດພື້ນທີ່ສີເຫຼືອງ (ເຂດທີ່ມີຄວາມສ່ຽງເຝົ້າລະວັງ) ແລະ ບ້ານອື່ນໆ ເປັນເຂດພື້ນທີ່ສີຂຽວ (ເຂດຕິດຕາມ).

- ໃຫ້ປິດການສັນຈອນເຂົ້າ-ອອກບ້ານໂນນສະຫວາດ ແລະ ໂຮງຮຽນ SOS ທີ່ເປັນພື້ນທີ່ສີແດງ, ມອບໃຫ້ອໍານາດການປົກຄອງບ້ານ ແລະ ການຈັດຕັ້ງດັ່ງກ່າວຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຕາມຄໍາສັ່ງສະບັບນີ້ຢ່າງເຂັ້ມງວດ.

3. ຫ້າມບໍ່ໃຫ້ມີການສັນຈອນໄປມາພາຍໃນນະຄອນ ໄກສອນພົມວິຫານ ຫຼັງຈາກເວລາ 21:00 ໂມງແລງ ຂອງແຕ່ລະວັນ-ໄປຈົນເຖິງເວລາ 05:00 ໂມງເຊົ້າ ຂອງວັນຖັດໄປ, ຍົກເວັ້ນໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ

4. ຫ້າມຄົນຢູ່ໃນນະຄອນ ໄກສອນພົມວິຫານ ເດີນທາງໄປຕ່າງເມືອງ, ຕ່າງແຂວງ, ຫ້າມຄົນຕ່າງແຂວງ, ຕ່າງເມືອງເດີນທາງເຂົ້າມານະຄອນ ໄກສອນພົມວິຫານ, ຍົກເວັ້ນຜູ້ທີ່ມີພູມລໍາເນົາ ເຮັດວຽກປະຈໍາຢູ່ແຂວງສະຫວັນນະເຂດ ແລະ ຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ, ຂັ້ນທ້ອງຖິ່ນ;

- ໃຫ້ໂຈະການບໍລິການຂົນສົ່ງໂດຍສານຈາກຕ່າງແຂວງ ແລະ ເມືອງເຂົ້າມານະຄອນ ໄກສອນພົມວິຫານ; ສ່ວນການຂົນສົ່ງສິນຄ້າແມ່ນໃຫ້ສາມາດຈັດຕັ້ງຕາມປົກກະຕິໂດຍໃຫ້ປະຕິບັດຕາມມາດຕະການປ້ອງກັນ ແລະ ຄວບຄຸມ ທີ່ຄະນະສະເພາະກິດຂັ້ນສູນກາງ ແລະ ຂັ້ນແຂວງວາງອອກ;
- ສໍາລັບຜູ້ທີ່ມີຄວາມຈໍາເປັນ ເຊັ່ນ: ການເຈັບເປັນ, ການເສຍຊີວິດ ແລະ ການປະຊຸມທາງລັດຖະການທີ່ຈະເດີນທາງໄປປະຕິບັດໜ້າທີ່ຢູ່ຕ່າງແຂວງ, ຕ່າງເມືອງ ແມ່ນໃຫ້ຂໍໜັງສືອະນຸຍາດເດີນທາງນໍາຄະນະສະເພາະກິດຂັ້ນແຂວງ, ຂັ້ນເມືອງ ຈຶ່ງສາມາດເດີນທາງໄດ້;

5. ຫ້າມຈັດກອງປະຊຸມ, ໂຮມຊຸມນຸມ, ງານສ້າງສັນຊຸມແຊວ, ງານລ້ຽງຕ່າງໆ, ບຸນປະເພນີ, ພິທີກໍາທາງສາດສະໜາທຸກກໍລະນີ.

6. ຫ້າມປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ກໍາມະກອນ, ນັກຮຽນ,ນັກສຶກສາ, ຜູ້ປະກອບການ, ນັກບວດ, ພໍ່ແມ່ປະຊາຊົນ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ອາໃສ ແລະ ດໍາລົງຊີວິດຢູ່ນະຄອນ ໄກສອນພົມວິຫານ ອອກຈາກເຮືອນ ຫຼື ທີ່ພັກອາໃສຂອງຕົນ, ຍົກເວັ້ນກໍລະນີຈໍາເປັນເຊັ່ນ: ໄປຊື້ເຄື່ອງອຸປະໂພກ-ບໍລິໂພກ, ໄປໂຮງໝໍ, ໄປປະຕິບັດໜ້າທີ່ໃນກິດຈະການທີ່ລະບຸໄວ້ , ສ່ວນຜູ້ທີ່ຈໍາເປັນຕ້ອງໄປເຮັດການຜະລິດກະສິກໍາເພື່ອເປັນສະບຽງອາຫານ, ຜູ້ໄປຄ້າຂາຍເຄື່ອງອຸປະໂພກ, ບໍລິໂພກ ກໍ່ສາມາດປະຕິບັດໄດ້ ແຕ່ມອບໃຫ້ອໍານາດການປົກຄອງບ້ານເປັນຜູ້ກວດກາ, ຄຸ້ມຄອງດ້ານຈໍານວນແລະຂອບເຂດຢ່າງຮັດກຸມເພື່ອບໍ່ໃຫ້ມີຄວາມສ່ຽງຕໍ່ການລະບາດຂອງພະຍາດໂຄວິດ-19;

- ສໍາລັບເດັກນ້ອຍ, ເຍົາວະຊົນ ຫຼື ຄົນໜຸ່ມທີ່ມີອາຍຸກະສຽນບໍ່ເຖິງ 18 ປີ ເຕັມ, ຖ້າມີຄວາມຈໍາເປັນອອກໄປຂ້າງນອກ ແມ່ນຕ້ອງມີຜູ້ປົກຄອງນໍາພາໄປທຸກຄັ້ງ;
- ສໍາລັບຜູ້ເຖົ້າທີ່ມີອາຍຸ 70 ປີຂຶ້ນໄປ ແມ່ນຫ້າມອອກຈາກເຮືອນ ຖ້າບໍ່ມີກໍລະນີຈໍາເປັນສຸກເສີນ;



สแกนด้วย CamScanner

- ໃນກໍລະນີມີຄວາມຈຳເປັນ ຕ້ອງອອກຈາກເຮືອນໄປວຽກທາງນອກ ແຕ່ລະຄັ້ງ ຕ້ອງພະຍາຍາມໃຫ້ມີຈຳນວນຄົນໜ້ອຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ແລະ ຕ້ອງໃສ່ຜ້າອັດປາກ-ດັງ ໂດຍສະເພາະໃນເຂດເທດສະບານນະຄອນ ໄກສອນພົມວິຫານ, ບ່ອນທີ່ມີຄົນຫຼາຍ, ບ່ອນທີ່ມີກິດຈະກຳ ແລະ ບ່ອນທີ່ອາດມີຄວາມສ່ຽງຕໍ່ການຕິດພະຍາດດັ່ງກ່າວ;

7. ໃຫ້ບັນດາພະແນກການ, ກົມກອງ, ວິສາຫະກິດລັດ - ເອກະຊົນ ແລະ ບັນດາບໍລິສັດໃນທົ່ວນະຄອນໄກສອນພົມວິຫານ ຫຼຸດຈຳນວນພະນັກງານ - ລັດຖະກອນ, ກຳມະກອນ ແລະ ຈັດຕັ້ງຜັດປ່ຽນກັນມາປະຈຳການໃນແຕ່ລະວັນ ຕາມຄວາມເໝາະສົມ (ສຳລັບພະນັກງານລັດຖະກອນຜູ້ທີ່ມີລູກນ້ອຍ ຕ້ອງເບິ່ງແຍງຢ່າງໃກ້ຊິດ, ອະນຸຍາດໃຫ້ພໍ່ ຫລື ແມ່ ຜັດປ່ຽນກັນດູແລລູກ). ຍົກເວັ້ນທະຫານ, ຕຳຫຼວດ, ເຈົ້າໜ້າທີ່ດັບເພີງ, ພະນັກງານຮັບຜິດຊອບລະບົບການບໍລິການໄຟຟ້າ, ນ້ຳປະປາ, ບໍລິສັດເກັບມ້ຽນຂີ້ເຫຍື້ອ, ໂທລະຄົມ ມະນາຄົມ, ການສື່ສານ, ຂົນສົ່ງສິນຄ້າທີ່ຈຳເປັນ, ພະນັກງານສາທາລະນະສຸກ, ແພດ-ໝໍ, ອາສາສະໝັກສາທາລະນະສຸກ, ຜູ້ທີ່ໄດ້ຮັບມອບໝາຍໃຫ້ປະຈຳການ ແລະ ເຮັດວຽກສະກັດກັ້ນ, ຄວບຄຸມ ແລະ ປິ່ນປົວພະຍາດ. ສ່ວນຜູ້ທີ່ບໍ່ໄດ້ມາປະຈຳການ ແມ່ນໃຫ້ສືບຕໍ່ເຮັດວຽກຂອງຕົນ ເປັນປົກກະຕິຢູ່ເຮືອນ ຫຼື ທີ່ພັກອາໄສໂດຍຜ່ານລະບົບສື່ສານອີເລັກໂຕຣນິກ ແລະ ເຄືອຂ່າຍອິນເຕີເນັດ ເຊັ່ນ: ໂທລະສັບ, ອີເມວ ແລະ ລະບົບກອງປະຊຸມທາງໄກ ແລະ ອື່ນໆ.

8. ໃຫ້ສືບຕໍ່ໂຈະການຮຽນ-ການສອນຊົ່ວຄາວຂອງມະຫາວິທະຍາໄລສະຫວັນນະເຂດ, ວິທະຍາໄລພາກລັດ ແລະ ເອກະຊົນ, ອາຊີວະສຶກສາ, ໂຮງຮຽນສົງສາສົງ, ໂຮງຮຽນ(ມັດທະຍົມຕົ້ນ, ມັດທະຍົມປາຍ, ປະຖົມ, ອະນຸບານ, ລ້ຽງເດັກ) ໃນຂອບເຂດທົ່ວນະຄອນ ໄກສອນພົມວິຫານ ໄປຮອດວັນທີ 23 ສິງຫາ 2021.

9. ໃຫ້ປິດກິດຈະການຊົ່ວຄາວໃນຂອບເຂດນະຄອນ ໄກສອນພົມວິຫານ ເຊັ່ນ: ການບໍລິການຫ້ອງກວດພະຍາດເອກະຊົນທຸກປະເພດ, ຮ້ານກິນດື່ມ, ຮ້ານຄາລາໂອເກະ, ຮ້ານຮົມຢາ, ຮ້ານບໍລິການນວດ, ຮ້ານສະປາ, ຮ້ານບັນເທີງ, ຄາສິໂນ, ຣີສອດ, ສວນນ້ຳ, ສວນອາຫານ, ສະຖານທີ່ທ່ອງທ່ຽວຕ່າງໆ, ຮ້ານເກມອອນລາຍ, ຕະຫຼາດກາງຄືນ, ຮ້ານເສີມສວຍ, ຮ້ານຕັດຜົມ, ທຸລະກິດການບໍລິການຂົນສົ່ງອາຫານທຸກປະເພດ (Foodpanda, ແຄນດີ້ ແລະ ບໍລິການສົ່ງອາຫານສ່ວນບຸກຄົນ) ລວມທັງສະຖານທີ່ອອກກຳລັງກາຍທຸກປະເພດໃນຮົ່ມ, ກາງແຈ້ງ ແລະ ຕາມສວນສາທາລະນະ (ເດີ່ນເຕະບານ, ສະໜາມກອບ, ເດີ່ນຕີບູນ, ເດີ່ນຕີດອກປີກໄກ່, ສະໜາມໄກ່ຕີ, ສະໜຸກເກີ້ ແລະ ອື່ນໆ)

- ສຳລັບຮ້ານອາຫານ ແລະ ຮ້ານກາເຟແມ່ນອະນຸຍາດໃຫ້ຂາຍ ແລະ ຊື້ກັບບ້ານເທົ່ານັ້ນ, ແຕ່ບໍ່ອະນຸຍາດໃຫ້ນັ່ງກິນໃນຮ້ານ;

10. ອະນຸຍາດໃຫ້ເປີດຕະຫລາດໄດ້ ນັບແຕ່ເວລາ 05 ໂມງ 00 ນາທີ ເຖິງ ເວລາ 17 ໂມງ 00 ນາທີ, ມອບໃຫ້ຜູ້ຈັດສັນຕະຫລາດທຸກແຫ່ງ ເປັນເຈົ້າການຕິດຕາມກວດກາ ແນະນຳຜູ້ຄ້າຂາຍ ແລະ ຜູ້ຊື້ສິນຄ້າພາຍໃນຕະຫລາດ ໃຫ້ປະຕິບັດມາດຕະການປ້ອງກັນຢ່າງເຄັ່ງຄັດ ເຊັ່ນ: ການໃສ່ຜ້າອັດປາກ-ດັງ, ການເວັ້ນໄລຍະຫ່າງ 01 ແມັດຂຶ້ນໄປ, ຈັດໃຫ້ມີເຈວລ້າງມື ແລະ ປະຕິບັດການຊີດຢາຂ້າເຊື້ອທຸກວັນຫລັງຈາກເລີກຕະຫລາດ;

11. ອະນຸຍາດໃຫ້ເປີດຮ້ານມິນິມາດ ແລະ ຮ້ານຂາຍເຄື່ອງຍ່ອຍຕ່າງໆ ແຕ່ເວລາ 07 ໂມງ 00 ນາທີ ເຖິງ ເວລາ 20 ໂມງ 00 ນາທີ, ມອບໃຫ້ຜູ້ບໍລິຫານມິນິມາດທຸກແຫ່ງເປັນເຈົ້າການຕິດຕາມກວດກາ ແນະນຳຜູ້ຄ້າຂາຍ ແລະ ຜູ້ຊື້ສິນຄ້າພາຍໃນມິນິມາດໃຫ້ປະຕິບັດມາດຕະການປ້ອງກັນຢ່າງເຄັ່ງຄັດ ເຊັ່ນ: ການໃສ່ຜ້າອັດປາກ-ດັງ, ການເວັ້ນໄລຍະຫ່າງ 01 ແມັດຂຶ້ນໄປ, ຈັດໃຫ້ມີເຈວລ້າງມື ແລະ ປະຕິບັດການຊີດຢາຂ້າເຊື້ອທຸກວັນຫລັງຈາກປິດຮ້ານ;



สแกนด้วย CamScanner

12. ຫ້າມບັນດາບຸກຄົນ ແລະ ນິຕິບຸກຄົນ ກັກຕຸນ ແລະ ຂຶ້ນລາຄາສິນຄ້າທຸກປະເພດ ເປັນຕົ້ນ ຜ້າປິດປາກ-ດັງ, ນ້ຳຢາລ້າງມື, ຢາປົວພະຍາດ, ອຸປະກອນການແພດ, ເຂົ້າ, ອາຫານ, ນ້ຳດື່ມ ແລະ ເຄື່ອງອຸປະໂພກ-ບໍລິໂພກ ອື່ນໆ;

13. ໃຫ້ບັນດາໂຮງງານ ຫຼື ຫົວໜ່ວຍການຜະລິດທີ່ຕັ້ງຢູ່ໃນເຂດ ຫຼື ບ້ານທີ່ຖືກກຳນົດເປັນເຂດແດງປິດ ຊົ່ວຄາວ. ຍົກເວັ້ນ ໂຮງງານທີ່ພະນັກງານ, ກຳມະກອນ ໄດ້ສັກວັກຊີນຄົບ 2 ເຂັມແລ້ວ, ໂຮງງານທີ່ມີຫໍພັກ ຂອງແຮງງານຢູ່ໃນໂຮງງານຂອງຕົນ, ໂຮງງານຜະລິດສິນຄ້າບໍລິໂພກ, ຢາປົວພະຍາດ, ເຄື່ອງປ້ອງກັນການ ລະບາດ ແລະ ອຸປະກອນການແພດ ແຕ່ໃຫ້ມີການຄຸ້ມຄອງຕາມມາດຕະການປ້ອງກັນຄະນະສະເພາະກິດວາງ ອອກຢ່າງເຂັ້ມງວດ.

- ສຳລັບໂຮງງານ ຫຼື ຫົວໜ່ວຍການຜະລິດ ທີ່ຕັ້ງຢູ່ນອກເຂດແດງ ສາມາດດຳເນີນກິດຈະການໄດ້ແຕ່ຕ້ອງ ປະຕິບັດຕາມມາດຕະການທີ່ ຄະນະສະເພາະກິດຂັ້ນສູງກາງ ກໍຄືຂັ້ນແຂວງວາງອອກ ແລະ ປະຕິບັດຕາມແຈ້ງ ການຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0485/ອຄ.ກອຫ ວັນທີ 21 ມິຖຸນາ 2021;

14. ມອບໃຫ້ຄະນະສະເພາະກິດຕ້ານໂຄວິດ-19 ຂອງນະຄອນ ໄກສອນພົມວິຫານ ສົມທົບກັບເຈົ້າໜ້າທີ່ ກ່ຽວຂ້ອງ ຕັ້ງຈຸດກວດກາຄົນເຂົ້າ-ອອກນະຄອນ ແລະ ບ້ານຕໍ່ບ້ານ. ພ້ອມທັງຊີ້ນຳໃຫ້ຫ້ອງການຖະແຫຼງ ຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການຜູ້ສື່ຂ່າວທຸກພາກສ່ວນ ສືບຕໍ່ເພີ່ມທະວີການໂຄສະນາ ເຜີຍແຜ່ຢ່າງກວ້າງຂວາງ ແລະ ເລິກເຊິ່ງດ້ວຍຫຼາຍຮູບແບບ ແລະ ຫຼາຍວິທີຜ່ານທາງສື່ຕ່າງໆ ເປັນຕົ້ນ ໂທລະພາບ, ວິທະຍຸ, ໂທລະໂຄ່ງ ແລະ ອື່ນໆ ເພື່ອໃຫ້ປະຊາຊົນເຫັນໄດ້ໄພອັນຕະລາຍຂອງພະຍາດໂຄວິດ-19, ຮູ້ຈັກວິທີສະກັດກັ້ນ ແລະ ຕ້ານພະຍາດນີ້ດ້ວຍຕົນເອງ.

15. ຫ້າມໂຄສະນາເຜີຍແຜ່ ແລະ ສົ່ງຂໍ້ມູນຂ່າວສານທີ່ບໍ່ມີມູນຄວາມຈິງໃນຮູບແບບໃດໜຶ່ງຜ່ານສື່ຕ່າງໆ ເຊິ່ງເຮັດໃຫ້ສັງຄົມມີຄວາມເຂົ້າໃຈຜິດ, ສ້າງຄວາມແຕກຕື່ນ ແລະ ສົ່ງຜົນກະທົບໃນທາງລົບຕໍ່ສັງຄົມ, ໃຫ້ຕິດຕາມແຫຼ່ງຂໍ້ມູນຂ່າວສານຂອງທາງການເທົ່ານັ້ນ;

16. ບຸກຄົນ ຫຼື ນິຕິບຸກຄົນ ຫາກບໍ່ປະຕິບັດຕາມຄຳສັ່ງສະບັບນີ້ ຈະຖືກດຳເນີນມາດຕະການປັບໃໝຕາມທີ່ ໄດ້ລະບຸບໄວ້ໃນ ຄຳສັ່ງເພີ່ມເຕີມຂອງທ່ານ ເຈົ້າແຂວງ ເລກທີ 0786/ຈຂ.ສຂ ວັນທີ 27 ເມສາ 2021;

17. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້ານະຄອນໄກສອນພົມວິຫານ.

ປະສົງສິນ ຈະເລີນສຸກ

Prasongsinh CHALEUNSOUK

ບ່ອນນຳສົ່ງ:

- ຄະນະສະເພາະກິດຂັ້ນແຂວງ
- ຄະນະສະເພາະກິດຂັ້ນນະຄອນ ແລະ ເມືອງ
- ປກຊ, ປກສ, ພະແນກການ - ກົມກອງອ້ອມຂ້າງແຂວງ
- ອົງການຈັດຕັ້ງຕ່າງໆທົ່ວແຂວງ
- ເກັບໄວ້ເປັນສຳເນົາ.



สแกนด้วย CamScanner